ໂຄງການການສຶກສາເພື່ອຊ່ວຍຕົນເອງ

ຄວາມຮູ້ທ້ອງຖິ່ນ

# ການປູກເຂົ້ານາປີ

(ສະບັບທົດລອງໃຊ້)



ຂໍ້ມູນຈາກຊາວບ້ານໜອງເມກ

ເມືອງຄຳເກີດ, ແຂວງບໍລິຄຳໄຊ

ໂດຍ: ຄູ ອ່ອນ ມູນວົງສາ

2007

# ຄວາມຮູ້ທ້ອງຖິ່ນ

# "ການປູກເຂົ້ານາປີ"

ຂໍ້ມູນຈາກ: ບ້ານໜອງເມກ
ເມືອງຄຳເກີດ, ແຂວງບໍລິຄຳໄຊ


ຂຽນໂດຍ: **ອ.ຈ ວັນແສງ ອະທິຖານ**

ຮຽບຮຽງໂດຍ:

**ອ.ຈ ບຸນຍົງ ແກ້ວຄູນເມືອງ**

**ອ.ຈ ວັນແສງ ອະທິຖານ**

ພິມແລະຈັດໜ້າໂດຍ: **ນ. ສຸກັນຍາ ສີວິໄຊ**

ແຕ້ມໂດຍ: **ທ. ພູມີ**



ເຈົ້າຂອງ: ຫ້ອງການສຶກສາເມືອງຄຳເກີດ
ແຂວງບໍລິຄຳໄຊ ແລະສູນອົບຮົມຮ່ວມ
ພັດທະນາ

ອຸປະຖຳໂດຍ:

New Zealand Agency for International
Development ( NZAID )

## ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານ ໜອງເມກ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ຊຶ່ງເປັນການຮີບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກຸ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ.

**ຄະນະຈັດທຳ**

**ສາລະໜ້າຮູ້**

**" ທີ່ມາຂອງການປູກເຂົ້າ "**

ການປູກເຂົ້າແມ່ນມີມາແຕ່ປູ່ຍ່າຕາຍາຍເຮົາເຄີຍພາກັນເຮັດໂດຍສະເພາະແມ່ນການປູກເຂົ້ານາປີ ຫລືທີ່ເຮົາພາກັນເວົ້າຈົນຕິດປາກກັນມາວ່າເຮັດນາປີນັ້ນເອງ.

ແຕ່ກ່ອນຄົນເຮົາອາໄສການເຂົ້າປ່າຫາຂຸດມັນເກັບໝາກໄມ້ມາກິນເທົ່ານັ້ນ, ຕໍ່ມາເມື່ອຮູ້ຈັກປູກເຂົ້າແລ້ວຄົນສ່ວນໃຫຍ່ຈຶ່ງພາກັນປູກເຂົ້າເພື່ອໄວ້ກິນໃນແຕ່ລະຄອບຄົວເພາະສະໄໝນັ້ນຍັງບໍ່ທັນມີການຊື້ຂາຍຄືແບບນີ້ເທື່ອ, ແຕ່ປະຈຸບັນການປູກເຂົ້າໄດ້ກາຍມາເປັນອີກອາຊີບໜຶ່ງໃນການທຳມາຫາກິນຂອງບັນດາຊາວນາຈຶ່ງເຮັດການປູກເຂົ້ານອກຈາກຈະເອົາໄວ້ກິນຕະຫລອດປີແລ້ວດຽວນີ້ຊາວນາສ່ວນຫລາຍແມ່ນເຮັດນາປູກເຂົ້າໄວ້ຂາຍເພື່ອເປັນການເສີມສ້າງລາຍໄດ້ໃຫ້ແກ່ຄອບຄົວນຳອີກ.

ສະນັ້ນການເຮັດນາປູກເຂົ້າໂດຍສະເພາະແມ່ນການເຮັດນາປີນັ້ນຈຶ່ງຈຳເປັນທີ່ເຮົາຈະຕ້ອງໄດ້ຮຽນຮູ້ນຳກັນວ່າເຮົາຄວນຈະມີການກະກຽມຫຍັງແດ່, ແລະ ຄວນຈະເຮັດຫຍັງອີກດ້ວຍ

# ການຂະຫຍາຍຕົວຂອງຕົ້ນເຂົ້າ

ເຂົ້າແມ່ນພືດຊະນິດໜຶ່ງເຊິ່ງມີການປ່ຽນແປງໄປຕາມແຕ່ລະຂັ້ນຕອນທີ່ແຕກຕ່າງກັນໃນການຂະຫຍາຍພືດຜ່ານ 6ໄລຍະ, ຕາມວົງຈອນໄລຍະຕົກກ້າໃຊ້ເວລາ 20 – 25 ວັນ ຈຶ່ງສາມາດຫລົກກ້າໄດ້.



ໄລຍະດຳ ໃຊ້ເວລາ 10 – 15 ວັນ



- ໄລຍະຂະຫຍາຍແຜ່ຕົ້ນໃຊ້ເວລາ 25 – 30 ວັນ



- ໄລຍະມານເປັນຮວງໃຊ້ເວລາ 25 – 30 ວັນ



ຕົ້ນເຂົ້າທີ່ພວມເປັນມານ

ໄລຍະເປັນຮວງແກ່ໃຊ້ເວລາ 25 - 30 ວັນ



ໄລຍະເມັດສຸກເຫລືອງໃຊ້ເວລາ 15 –20 ວັນ



- ຕົ້ນເຂົ້າທີ່ສຸກເຫລືອງໄລຍະນີ້ສາມາດກ່ຽວໄດ້



# ເຊີ້ງ: ການແຂ່ງຂັນດຳນາ

ໂຮ..............ຮິ້ວ

ເອົາມາເຮົາມາ ພ້ອມກັນເຮັດນາ
ຫ້າວສີບາງສາ ພ້ອມກັບຫຼົກກ້າ
ບໍ່ໃຫ້ຢູ່ລ້າ ເຮົາພາກັນດຳ
ຮ້ອງເພງໄປນຳ ມັນຈັ່ງຊີມ່ວນ
ເຮົາມາແບ່ງສ່ວນ ແຂ່ງຂັນກັນດຳ
ຂ້ອຍດຳເຈົ້າດຳ ໄຮ່ນີ້ໄຮ່ໃໝ່

ໂຮ..............ຮິ້ວ



# ເພັງ: ມາຊ່ວຍນ້ອງດຳນາ

ເຊີນເດີ ເຊີນອ້າຍມາຊ່ວຍ
ນ້ອງຊື່ສາວໝວຍ ມາຊ່ວຍນ້ອງດຳນາ
ກົກກີບກ້າ ຂອງນ້ອງງາມຕາ
ສົດຊື່ນແທ້ໜາ ຂຽວງາມຕາສົດໃສ
ມາເດີ ໃຫ້ອ້າຍມາຊ່ວຍ
ມານຳໝວຍ ມາຊ່ວຍດຳນາ
ນ້ອງຊິພາ ອ້າຍໄປຫາບກ້າ
ເກັ່ງແທ້ໜາ ນ້ອງຂໍຂອບໃຈນຳ



# ກາບ: ເຂົ້າສຸກເຫລືອງ

ດິນແດນປ່າ ໜອງເນກງາມຫລາຍ
ທົ່ງນາຢາຍ ສຸກເຫລືອງອຸ່ມທຸ່ມ
ຕົ້ນເປັນພຸ່ມ ເປັນຖັນເປັນແຖວ
ດຳເປັນແລວ ລຽນກັນກ່ຽວງ່າຍ
ກ່ຽວໃຫ້ຫລາຍ ປະໄວ້ເປັນຜ່ອນ
ໃຜແລ້ວກ່ອນ ກໍມາຊ່ວຍກັນ
ອີກສິບວັນ ກໍຈະສຳເລັດ
ຊ່ວຍກັນເຮັດ ເຮົາສຸກສະບາຍ



## ບົດເລກທີ 1

( ສຳລັບນັກຮຽນ ປ.2 + ປ.3 + ປ.4 )

ລຸງໂມ້ ອາຊີບຊາວນາ, ປີນີ້ເຂົ້ານາລາວງາມຫລາຍ ແລະ ລາວໄດ້ ກອງເຂົ້າ 3 ກອງສະເໝີກັນ, ລາວຕີເຂົ້າກອງທີ 1ໄດ້ເຂົ້າຢູ່ 750 Kg

ຢາກຖາມພວກນ້ອງວ່າ:

- ຖ້າລາວຕີເຂົ້າກອງທີ່ 2 ຈະໄດ້ເຂົ້າຈັກກິໂລກຼາມ
- ຖ້າລາວຕີເຂົ້າກອງທີ່ 3 ຈະໄດ້ຈັກກິໂລກຼາມ
- ຖາມວ່າລວມກັນທັງໝົດຈະໄດ້ເຂົ້າຈັກກິໂລກຼາມ



## ນິທານ" ເມັດເຂົ້າໜຽວ "

ແຕ່ກີ້ແຕ່ກ່ອນມີເມັດເຂົ້າເມັດໜຶ່ງຂີ້ດື້ງ, ຢູ່ມາມື້ໜຶ່ງເມັດເຂົ້ານ້ອຍໄດ້ລັກອອກໄປຫລິ້ນຢູ່ນອກບ້ານ " ໂອ! ມື້ນີ້ອາກາດແຈ່ມໃສດີເອີ້ຍ ! ຂ້ອຍຈະໄປຫລິ້ນກ່ອນ " ເວົ້າແລ້ວໆເມັດເຂົ້ານ້ອຍກໍໂຕບລົງຈາກຖົງ

ພໍແຕ່ອອກຫວິດເຮືອນໄປບຶດໜຶ່ງເມັດເຂົ້ານ້ອຍກໍຮ້ອງຂຶ້ນດ້ວຍຄວາມຕົກໃຈເມື່ອໄປພົບໄກ່ໂຕໃຫຍ່ຢືນລັດທາງຢູ່ " ຢຸດ ! ເມັດເຂົ້ານ້ອຍມຶງຊິໄປໃສ ມານີ້ມາໃຫ້ກູກິນດຽວນີ້ " ໄກ່ເວົ້າຂຶ້ນດ້ວຍສຽງທີ່ເປັນຕາຢ້ານ

" ຢ່າ ! ຢ່າ! ຢ່າກິນຂ້ອຍເລີຍ " ເມັດເຂົ້າທັງຮ້ອງທັງຮີບພ້າວແລ່ນໜີຢ່າງໄວວາ

ເມື່ອໜີຈາກໄກ່ມາໄດ້ແລ້ວເມັດເຂົ້າຮູ້ສຶກເມື່ອຍພໍດີເວລານັ້ນຝົນກໍເລີ່ມຕົກລົງມາເມັດເຂົ້ານ້ອຍພັກຜ່ອນ

ພໍຕື່ນຂຶ້ນມາເມັດເຂົ້ານ້ອຍຕົກໃຈ " ອຸ້ຍແມ່ນຫຍັງຢູ່ເທິງຫົວຂອງຂ້ອຍນີ້! ໂອຍບອກຂ້ອຍແດ່ດຸວ່ານີ້ມັນແມ່ນຫຍັງ " ເມັດເຂົ້ານ້ອຍບໍ່ຮູ້ວ່ານັ້ນເກີດຫຍັງຂຶ້ນກັບຕົນເອງເລີຍໄປຊອກຖາມວ່ານັ້ນແມ່ນຫຍັງ ? ຈົນໄປພົ້ກັບລຸງກົບລຸງກົບຈຶ່ງບອກເມັດເຂົ້າວ່າ: " ເຈົ້າບໍ່ຕ້ອງຢ້ານດອກເມັດເຂົ້ານ້ອຍເອີຍ, ເພາະວ່າເຈົ້າກຳລັງຈະກາຍເປັນຕົ້ນກ້າແລ້ວ " ລຸງກົບອະທິບາຍໃຫ້ເມັດເຂົ້າ

ນ້ອຍຟັງ. ເມື່ອເມັດເຂົ້ານ້ອຍຮູ້ແນວນັ້ນຈຶ່ງໄດ້ໄປຫາໝູ່ ແລະເອົາຮາກຢັ່ງລົງດິບ, ອີກບໍ່ດົບເມັດເຂົ້ານ້ອຍພ້ອມ ດ້ວຍໝູ່ກໍພາກັນຖອກຮວງງາມຈຶ່ງເຮັດໃຫ້ປີນີ້ຊາວນາໄດ້ ຮັບຜົນຜະລິດຫລາຍກວ່າທຸກປີ



## ບົດເລກປ. 5

ລຸງສອນມີອາຊີບຊາວນາ, ແຕ່ລະປີລາວເຮັດນາປີໄດ້ເຂົ້າ 15 ໂຕ່ນ, ແຕ່ປີນີ້ໄດ້ຍ້ອນວ່າຝົນຕົກຫລາຍແລະຖືກຕ້ອງຕາມລະດູຈຶ່ງເຮັດໃຫ້ລຸງສອນໄດ້ເຂົ້າຫລາຍກວ່າປີກາຍນີ້ 18 % ຖາມວ່າ ປີນີ້ ລຸງສອນໄດ້ເຂົ້າຈັກໂຕ່ນ ?

- ຖ້າຄິດໄລ່ເປັນກິໂລເດລຸງສອນຈະໄດ້ເຂົ້າຈັກກິໂລກຼາມ ?



## ຄຳນຳ

ປຶ້ມເຫລັ້ມນີ້ເປັນຜົນງານການຂຽນ ແລະ ໃຫ້ຂໍ້ມູນຂອງຄູອາຈານແລະຊາວບ້ານ ໜອງເມກ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ຊຶ່ງເປັນການຮິບໂຮມປະສົບການໃນການດຳລົງຊີວິດແບບເພິ່ງຕົນເອງ, ກູ້ມຕົນເອງໂດຍອາໄສທຳມະຊາດ, ສິ່ງແວດລ້ອມອ້ອມຕົວແບບດັ້ງເດີມຕັ້ງແຕ່ດົນນານຈົນເຖິງປະຈຸບັນນີ້.

ປຶ້ມເຫລັ້ມນີ້ເປັນບ່ອນອີງໃຫ້ແກ່ຄູໃນການສຶກສາແນວຄວາມຄິດຮັກທຳມະຊາດ, ຮັກພູມປັນຍາກໍຄືວິຖີຊີວິດທ້ອງຖິ່ນໃຫ້ແກ່ເດັກເພື່ອສ້າງແນວຄິດຮັກທ້ອງຖິ່ນຂອງຕົນ.

ຄະນະຈັດທຳຄິດວ່າປຶ້ມເຫລັ້ມນີ້ຊຶ່ງເປັນສະບັບທົດລອງໃຊ້ ແລະ ຄົງເປັນປະໂຫຍດບໍ່ຫລາຍກໍໜ້ອຍໃຫ້ແກ່ຄູອາຈານໃນການສິດສອນເດັກພ້ອມກັນນັ້ນຄິດວ່າຍັງມີຫລາຍສິ່ງຫລາຍຢ່າງທີ່ຍັງຂາດຕົກບົກພ່ອງທີ່ພ້ອມຈະປັບປຸງປ່ຽນແປງຕາມຄວາມເໝາະສົມ.

**ຄະນະຈັດທຳ**